ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------------

ສະພາແຫ່ງຊາດ　　　　　　　　　　　　　　ເລກທີ 0133 /ຄປຈ

ຄະນະປະຈຳ　　　　　　　　　　　　ນະຄອນຫຼວງວຽງຈັນ, ວັນທີ 04 / 12 / 13

# ມະຕິ
# ຂອງຄະນະປະຈຳສະພາແຫ່ງຊາດ
# ວ່າດ້ວຍ ການຕີຄວາມໝາຍກົດໝາຍ

ອີງຕາມມາດຕາ 56 ຂໍ້ 2 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ແລະ ມາດຕາ 26 ຂໍ້ 5 ຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ ກ່ຽວກັບການຕີຄວາມໝາຍ ລັດຖະທຳມະນູນ ແລະ ກົດໝາຍ ຕ່າງໆ;

ເພື່ອຮັບປະກັນໃຫ້ແກ່ການຕີຄວາມໝາຍ ລັດຖະທຳມະນູນ ແລະ ກົດໝາຍ ຖືກຕ້ອງ ແລະ ຊັດເຈນ ແລະເຮັດໃຫ້ວຽກງານຕີຄວາມໝາຍກົດໝາຍ ດຳເນີນໄປຢ່າງເປັນປົກກະຕິ, ມີປະສິດທິຜົນ, ເປັນເອກະພາບ, ເຂົ້າໃຈງ່າຍ ແລະ ສາມາດປະຕິບັດໄດ້ນັ້ນ

## ຄະນະປະຈຳສະພາແຫ່ງຊາດ ອອກມະຕິ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິຕົກລົງສະບັບນີ້ ຜັນຂະຫຍາຍເນື້ອໃນ ຂອງລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ກ່ຽວກັບການຕີຄວາມໝາຍ ລັດຖະທຳມະນູນ ແລະ ກົດໝາຍ ເພື່ອແນະນຳລະອຽດ ກ່ຽວກັບວິທີການ, ຂັ້ນຕອນຂອງການພິຈາລະນາການຕີຄວາມໝາຍ ແນໃສ່ເຮັດໃຫ້ຄວາມເຂົ້າໃຈເນື້ອໃນ

ມາດຕາກົດໝາຍ ຖືກຕ້ອງ, ມີຄວາມເປັນເອກະພາບ ແລະ ເຮັດໃຫ້ຄວາມສາມາດປະຕິບັດກົດໝາຍ ສະດວກ ແລະ ງ່າຍຂຶ້ນ.

ມາດຕາ 2 **ການຕີຄວາມໝາຍກົດໝາຍ**

ການຕີຄວາມໝາຍກົດໝາຍ ແມ່ນ ການນຳເອົາຄຳສັບ ຫຼື ເນື້ອຄວາມ ລວມທັງປະໂຫຍກທີ່ມີຄວາມເຂົ້າໃຈໄປໄດ້ຫລາຍຢ່າງ ຫຼື ແຕກຕ່າງກັນນັ້ນ ມາກຳນົດໃຫ້ມີຄວາມຊັດເຈນ, ເຂົ້າໃຈເປັນເອກະພາບ ໃນຄວາມໝາຍດຽວກັນ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕີກລັງ.

ເນື້ອໃນການຕີຄວາມໝາຍກົດໝາຍ ມີຄຸນຄ່າໃຊ້ໄດ້ ຄືກັນກັບກົດໝາຍ.

ມາດຕາ 3 **ພື້ນຖານທີ່ສະເໜີໃຫ້ຕີຄວາມໝາຍ**

**ພື້ນຖານທີ່ສະເໜີໃຫ້ຕີຄວາມໝາຍກົດໝາຍ ມີ ດັ່ງນີ້:**

- ເມື່ອມີຄວາມເຂົ້າໃຈເນື້ອໃນຂອງກົດໝາຍ ທີ່ແຕກຕ່າງກັນຜ່ານການປະຕິບັດໜ້າທີ່ວຽກງານຕົວຈິງ;
- ເມື່ອມີບາງມາດຕາຂອງກົດໝາຍ ຮຽກຮ້ອງໃຫ້ມີການກຳນົດຂອບເຂດ ຫຼື ເນື້ອໃນຢ່າງຊັດເຈນ ຫຼື ຕ້ອງໃຫ້ມີການເພີ່ມເນື້ອໃນເຂົ້າຕື່ມ;
- ເມື່ອມີບົດບັນຍັດຂອງກົດໝາຍ ຮຽກຮ້ອງໃຫ້ມີຄວາມແນ່ນອນ;
- ເມື່ອມີການປັບປຸງມາດຕາຂອງກົດໝາຍ ຊຶ່ງມີຄວາມຈຳເປັນຕ້ອງກຳນົດເວລາ ໃນການຈັດຕັ້ງປະຕິບັດກົດໝາຍນັ້ນ.

ມາດຕາ 4 **ອົງການຈັດຕັ້ງ ແລະ ບຸກຄົນ ທີ່ມີສິດສະເໜີໃຫ້ຕີຄວາມໝາຍ**

**ອົງການຈັດຕັ້ງ ແລະ ບຸກຄົນ ທີ່ມີສິດສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອໃຫ້ຕີຄວາມໝາຍນັ້ນ ມີ ດັ່ງນີ້:**

- ປະທານປະເທດ;
- ລັດຖະບານ;
- ກຳມາທິການຂອງສະພາແຫ່ງຊາດ;
- ສານປະຊາຊົນສູງສຸດ;
- ອົງການໄອຍະການປະຊາຊົນສູງສຸດ;
- ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

ອົງການປົກຄອງທ້ອງຖິ່ນ, ບັນດາສຳນັກງານ ແລະ ສະຖາບັນ ກໍມີສິດຮ້ອງຂໍໃຫ້ຕີຄວາມໝາຍເນື້ອໃນ ຫຼື ບັນຫາຕ່າງໆ ຂອງກົດໝາຍ ເຊັ່ນດຽວກັນ ໂດຍຜ່ານການຈັດຕັ້ງຂັ້ນເທິງຂອງຕົນ.

ພະນັກງານອາວຸໂສ, ພະນັກງານບໍານານ ທີ່ເຫັນວ່າມີຄວາມຈໍາເປັນ ໃນການຕີຄວາມໝາຍກົດໝາຍ ກໍໃຫ້ສະເໜີຫາອົງການທີ່ຕົນເຄີຍເຮັດວຽກນໍາໃນທີ່ຜ່ານມາ ເພື່ອຄົ້ນຄວ້າ ແລ້ວສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ.

## ໝວດທີ 2
## ຂັ້ນຕອນການດໍາເນີນການຕີຄວາມໝາຍ

### ມາດຕາ 5 ບ່ອນອີງໃນການຕີຄວາມໝາຍ

ການຕີຄວາມໝາຍກົດໝາຍ ແມ່ນ ດໍາເນີນບົນພື້ນຖານ ລັດຖະທໍາມະນູນ, ກົດໝາຍ, ສົນທິສັນຍາສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ, ຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມສອດຄ່ອງຂອງເນື້ອໃນກົດໝາຍ ກັບຫຼັກວິທະຍາສາດ-ເຕັກນິກ ແລະ ວິຊາການຂອງຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 6 ການສະເໜີໃຫ້ຕີຄວາມໝາຍ

ອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດສະເໜີ ໃຫ້ຕີຄວາມໝາຍ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 4 ຂອງມະຕິຕົກລົງສະບັບນີ້ ຕ້ອງສະເໜີ ເນື້ອໃນ, ຈຸດ ຫຼື ບັນຫາທີ່ຕົນເຫັນວ່າ ບໍ່ຊັດເຈນ, ມີລັກສະນະຄຸມເຄືອ ໂດຍໃຫ້ເຫດຜົນທີ່ຕົນເຂົ້າໃຈ ແລະ ຕົນຈະສະເໜີແນວໃດ ເພື່ອໃຫ້ເນື້ອໃນຖືກຕ້ອງ ແລະ ມີຄວາມແຈ້ງຂາວດີ.

ກໍາມາທິການກົດໝາຍ ແລະ ກໍາມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເຮັດໜ້າທີ່ຕິດຕາມກວດກາ ການປະຕິບັດກົດໝາຍ, ຄົ້ນຄວ້າສາເຫດ ທີ່ພາໃຫ້ກົດໝາຍ ບໍ່ໄດ້ຮັບການປະຕິບັດ ຢ່າງຄົບຖ້ວນ ຫຼື ສາເຫດທີ່ພາໃຫ້ມີການລະເມີດກົດໝາຍ ແລ້ວສະເໜີການຕີຄວາມໝາຍ ໂດຍໜ້າທີ່ຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອຕົກລົງ.

### ມາດຕາ 7 ການຕີຄວາມໝາຍກົດໝາຍ ຕາມການສະເໜີ

ພາຍຫຼັງໄດ້ຮັບການສະເໜີ ໃຫ້ຕີຄວາມໝາຍກົດໝາຍ ພ້ອມດ້ວຍຮ່າງເນື້ອໃນການຕີຄວາມໝາຍກົດໝາຍ ຂອງອົງການຈັດຕັ້ງ ຫຼື ບຸກຄົນ ທີ່ກ່າວໄວ້ໃນມາດຕາ 4 ຂອງມະຕິຕົກລົງສະບັບນີ້ແລ້ວ ຄະນະປະຈໍາສະພາແຫ່ງຊາດ ມອບໃຫ້ກໍາມາທິການກົດໝາຍ ດໍາເນີນການຄົ້ນຄວ້າ ໂດຍປະສານສົມທົບກັບກໍາມາທິການອື່ນຂອງສະພາແຫ່ງຊາດ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄວາມເປັນເອກະພາບ ແລະ ຄວາມສົມເຫດສົມຜົນ.

ເມື່ອສໍາເລັດການຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງການຕີຄວາມໝາຍແລ້ວ ເຂົ້າກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຕົກລົງ.

**ມາດຕາ 8 ການຕີຄວາມໝາຍກົດໝາຍ ໂດຍໜ້າທີ່**

ການຕີຄວາມໝາຍກົດໝາຍ ໂດຍໜ້າທີ່ ແມ່ນຄວາມຮັບຜິດຊອບໂດຍກົງ ແລະ ຢ່າງເປັນປະຈຳຂອງກຳມາທິການກົດໝາຍ ໂດຍສົມທົບກັບກຳມາທິການອື່ນທີ່ກ່ຽວຂ້ອງ ພາຍໃຕ້ການຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ ພາຍຫຼັງກອງປະຊຸມສະພາແຫ່ງຊາດ ແຕ່ລະເທື່ອໄດ້ຮັບຮອງເອົາກົດໝາຍ ຫຼື ກົດໝາຍ ຊຶ່ງໄດ້ປະກາດໃຊ້ແລ້ວ ຖ້າເຫັນວ່າຍັງມີເນື້ອໃນ ຊຶ່ງສາມາດຕີຄວາມໝາຍໄດ້ຫຼາຍຢ່າງ ຫຼື ພາຍຫຼັງການຕິດຕາມກວດກາຂອງກຳມາທິການກົດໝາຍ, ກຳມາທິການອື່ນ ກໍຄືຄະນະປະຈຳສະພາແຫ່ງຊາດ ທີ່ເຫັນວ່າອາດຈະພາໃຫ້ມີການປະຕິບັດ ຫຼື ການເຂົ້າໃຈເນື້ອໃນກົດໝາຍ ບໍ່ເປັນເອກະພາບກັນ.

ເມື່ອສຳເລັດການຄົ້ນຄວ້າ ແລະຮຽບຮຽງເນື້ອໃນຂອງການຕີຄວາມໝາຍແລ້ວ ກໍໃຫ້ດຳເນີນການຕາມທີ່ໄດ້ກຳນົດໄວ້ ໃນວັກທີ 2 ຂອງມາດຕາ 7 ເທິງນີ້.

**ມາດຕາ 9 ການຂຽນເນື້ອໃນການຕີຄວາມໝາຍ**

**ການຕີຄວາມໝາຍກົດໝາຍ ໃຫ້ປະຕິບັດ ຕາມເນື້ອໃນ ດັ່ງນີ້:**

- ການຂຽນເນື້ອໃນ ໃຫ້ຊັດເຈນ, ເລິກເຊິ່ງ ແລະ ຮັດກຸມ ເມື່ອອ່ານແລ້ວ ກໍໃຫ້ເຂົ້າໃຈໃນຄວາມໝາຍ ອັນໜຶ່ງອັນດຽວກັນ;
- ເນື້ອໃນທີ່ຂຽນນັ້ນ ແມ່ນບໍ່ໃຫ້ມີການຕີຄວາມໝາຍ ຕື່ມອີກ;
- ເນື້ອໃນການຕີຄວາມໝາຍ ຍັງຕ້ອງໃຫ້ສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໄວ້ ໃນມາດຕາ 5 ຂອງມະຕິຕົກລົງສະບັບນີ້ອີກດ້ວຍ.

**ມາດຕາ 10 ຄວາມຮັບຜິດຊອບຂອງກຳມາທິການກົດໝາຍ**

ພາຍຫຼັງໄດ້ຮັບຮ່າງເນື້ອໃນການຕີຄວາມໝາຍກົດໝາຍແລ້ວ ກຳມາທິການກົດໝາຍ ຕ້ອງກວດກາຮ່າງດັ່ງກ່າວ ຢ່າງຮອບດ້ານ ເຊັ່ນ ຄວາມໜັກແໜ້ນ, ຄວາມຊັດເຈນ, ຄວາມຖືກຕ້ອງ ແລະ ສອດຄ່ອງກັບນິຕິກຳຕ່າງໆ ທີ່ປະກາດໃຊ້ແລ້ວ ລວມທັງຄວາມສາມາດປະຕິບັດເນື້ອໃນນັ້ນ ຢ່າງເປັນເອກະພາບກັນ.

## ໝວດທີ 3

## ການພິຈາລະນາຮ່າງການຕີຄວາມໝາຍ

**ມາດຕາ 11 ການນຳສົ່ງຮ່າງການຕີຄວາມໝາຍ**

ຮ່າງການຕີຄວາມໝາຍກົດໝາຍ ຕ້ອງນຳສົ່ງໃຫ້ບັນດາກຳມະການໃນຄະນະປະຈຳສະພາແຫ່ງຊາດ ຢ່າງໜ້ອຍໜຶ່ງອາທິດ ກ່ອນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນຈະເປີດຂຶ້ນ ເພື່ອໃຫ້ມີເວລາຄົ້ນຄວ້າ ແລະ ປະກອບຄຳເຫັນ.

ທຸກຄຳເຫັນຂອງບັນດາກຳມະການ ໃນຄະນະປະຈຳສະພາແຫ່ງຊາດ ຕໍ່ຮ່າງດັ່ງກ່າວ ພາຍຫຼັງສັງລວມແລ້ວ ຈະສົ່ງໃຫ້ກຳມາທິການກົດໝາຍປັບປຸງ ຈຶ່ງນຳເຂົ້າລາຍງານຕໍ່ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

**ມາດຕາ 12 ການພິຈາລະນາຮ່າງການຕີຄວາມໝາຍ ຢູ່ ກອງປະຊຸມ**

**ການພິຈາລະນາຮ່າງການຕີຄວາມໝາຍກົດໝາຍ ຢູ່ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:**

- ປະທານກຳມາທິການກົດໝາຍ ລາຍງານຮ່າງດັ່ງກ່າວ ຕໍ່ກອງປະຊຸມພ້ອມທັງ ຊີ້ແຈງ, ອະທິບາຍເຫດຜົນຂອງການສະເໜີ ໃຫ້ຕີຄວາມໝາຍ ຫຼື ການຕີຄວາມໝາຍໂດຍໜ້າທີ່;
- ປະທານກຳມາທິການກົດໝາຍ ສະເໜີບັນຫາທີ່ເປັນຈຸດສຸມ ເພື່ອໃຫ້ກອງປະຊຸມມີຄຳເຫັນເຈາະຈີ້ງ ແລະ ລົງເລິກສະເພາະ;
- ກອງປະຊຸມມີຄຳເຫັນ, ຕັ້ງຄຳຖາມ ແລະ ປຶກສາຫາລື ກ່ຽວກັບເນື້ອໃນການຕີຄວາມໝາຍ;
- ປະທານກຳມາທິການກົດໝາຍ ມີ ຄຳເຫັນຊີ້ແຈງ, ຕອບຄຳຖາມ ທີ່ຕັ້ງຂຶ້ນຢູ່ກອງປະຊຸມ;
- ປະທານກອງປະຊຸມ ສະຫຼຸບ, ມີຄຳເຫັນ, ໃຫ້ທັດສະນະ ເພື່ອໃຫ້ກຳມາທິການກົດໝາຍ ນຳເອົາໄປປັບປຸງ.

ເພື່ອຄວາມຮັດກຸມ ແລະຄວາມຖືກຕ້ອງຂອງການຕີຄວາມໝາຍ ພະນັກງານອາວຸໂສ ທີ່ມີຄວາມຮູ້ທາງດ້ານກົດໝາຍ ຫຼື ຜູ້ຊ່ຽວຊານທາງດ້ານກົດໝາຍ ອາດຖືກເຊີນເຂົ້າຮ່ວມ ແລະ ມີຄວາມເຫັນຕໍ່ກອງປະຊຸມ.

**ມາດຕາ 13 ການຮັບຮອງ ແລະ ປະກາດໃຊ້ ການຕີຄວາມໝາຍ**

ການຕີຄວາມໝາຍກົດໝາຍ ຖືກຮັບຮອງເອົາ ຕາມສຽງສ່ວນຫຼາຍ ຂອງກຳມະການໃນຄະນະປະຈຳສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືກປະກາດໃຊ້ດ້ວຍມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

ກຳມະການ ໃນຄະນະປະຈຳ, ບັນດາກຳມາທິການສະພາແຫ່ງຊາດ ແລະ ຂະແໜງການທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດ ມະຕິຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ມະຕິຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ວັນປະທານ ຄະນະປະຈຳສະພາແຫ່ງຊາດລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງ, ຄຳສັ່ງ ຫຼື ຄຳແນະນຳ ທີ່ຂັດກັບມະຕິຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປານີ ຢາທໍ່ຕູ້